ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 0690 /ຈນວ

ລົງວັນທີ: 13 JUL 2018

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ

– ອີງຕາມ ມາດຕາ 19 ແລະ 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າ ແຂວງ, ເຈົ້າຄອງນະຄອນ.

– ອີງຕາມ ມາດຕາ 42 ຂອງກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ) ສະບັບເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013.

– ອີງຕາມ ມາດຕາ 33 ແລະ 34 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ກ່ຽວກັບປະເພດທີ່ດິນວັດທະນະທຳ.

– ອີງຕາມ ມະຕິຕົກລົງ ກອງປະຊຸມ ສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 011/ສປ.ນວ, ລົງວັນທີ 22 ມີນາ 2017 ແລະ ຕາມໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນ ນວ ສະບັບລົງວັນທີ 13 ພະຈິກ 2017.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ :

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ເພື່ອເຮັດໃຫ້ເຂດດັ່ງກ່າວ ຊົງກຽດສັກສີ ເປັນເຂດພິທີການ, ເປັນມໍລະດົກ, ເປັນສູນລວມຈິດໃຈ, ວັດທະນະທຳ, ສາສະນະສະຖານຂອງຊາດ ແລະ ເປັນເຂດອັດສະລິຍະ, ຄວາມສີວິໄລ, ທັງເປັນເຂດແຫຼ່ງທ່ອງທ່ຽວປະຫວັດສາດ-ວັດທະນະທຳ ແລະ ປະກອບສ່ວນສຳຄັນເຂົ້າໃນການພັດທະນາ ນະຄອນຫຼວງວຽງຈັນ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ມາດຕາ 2 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະໜາມຫຼວງວຽງຈັນ (Vientiane square)**: ໝາຍເຖິງ ເດີ່ນໃຫຍ່ ແລະ ຊື່ງກຽດ, ມີເຄົ້າປະຫວັດດ້ານການເມືອງຂອງຊາດ, ເປັນສະຖານທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວສາທາລະນະກິດ, ການຈັດງານທີ່ສຳຄັນຂອງຊາດ, ຂອງນະຄອນຫຼວງວຽງຈັນ ແລະ ຂອງມວນຊົນ.
2. **ສາສະນະສະຖານແມ່ນ**: ພື້ນທີ່ ແລະ ສິ່ງປຸກສ້າງທີ່ຮັບໃຊ້ໃຫ້ແກ່ກິດຈະກຳທາງດ້ານສາສະໜາເຊັ່ນ: ວັດທາດຫຼວງເໜືອ, ວັດທາດຫຼວງໃຕ້, ຫໍທຳມະສະພາ ແລະ ອົງພະທາດຫຼວງ.
3. **ສາທາລະນະສະຖານແມ່ນ**: ສະຖານທີ່ສາທາລະນະອ້ອມຂ້າງພະທາດຫຼວງ-ເດີ່ນສະໜາມຫຼວງ ເຊັ່ນ: ( ຕຶກສະພາແຫ່ງຊາດ, ອານຸສາວະລີນັກຮົບນິລະນາມ, ສວນໄຊເສດຖາ, ວົງວຽນ 450 ປີ, ສວນໜອງສະພັງເລນ, ສະຖານີໄຟຟ້າ...)
4. **ບໍລິເວນອ້ອມຮອບພະທາດຫຼວງ-ສະໜາມຫຼວງວຽງຈັນ** ໝາຍເຖິງຂອບເຂດດ້ານນອກຂອງກຳແພງພະທາດຫຼວງ ແລະ ສະໜາມຫຼວງ ຊຶ່ງປະກອບດ້ວຍ: ບ້ານທາດຫຼວງ (ເໜືອ, ກາງ, ໃຕ້), ບ້ານໜອງບອນ, ບ້ານໂພນສະອາດ, ບ້ານໂພນເຄັງ, ບ້ານວຽງຈະເລີນ ແລະ ບ້ານຮ່ອງແກ.
5. **ການຄຸ້ມຄອງກິດຈະການ**: ໝາຍເຖິງ ການກຳນົດ ແລະ ການຈັດຕັ້ງປະຕິບັດນິຕິກຳ, ລະບຽບການກ່ຽວຂ້ອງ, ການຮັກສາໄວ້ວັດຖຸພັນ, ສະຖານກິດຈະການ, ການຊີ້ງຄຸນຄ່າ ແລະ ຮູບຊົງດັ່ງເດີມໄວ້, ຕິດຕາມກວດກາການປະຕິບັດຕົວຈິງ, ແກ້ໄຂບັນຫາການນຳໃຊ້ ແລະ ຄວາມຮັບຜິດຊອບຂອງອົງການກ່ຽວຂ້ອງ.
6. **ເດີ່ນພະທາດຫຼວງ** ໝາຍເຖິງ ພື້ນທີ່ທັງໝົດຢູ່ກຳແພງລຽນຊັ້ນນອກຫາຊັ້ນໃນ, ລວມທັງອານຸສາວະລີເຈົ້າໄຊເສດຖາ, ເດີ່ນວັດທາດຫຼວງເໜືອ, ໃຕ້.
7. **ຂອບເຂດການຄຸ້ມຄອງ** ໝາຍເຖິງ ພື້ນທີ່ສະໜາມຫຼວງ, ພະທາດຫຼວງ, ເດີ່ນພະທາດຫຼວງ, ສາສະນະສະຖານ ແລະ ສາທາລະນະສະຖານ ແລະ ບໍລິເວນອ້ອມຮອບພະທາດຫຼວງ-ສະໜາມຫຼວງ.
8. **ການຈັດກິດຈະກຳ** ໝາຍເຖິງ ການນຳໃຊ້ເດີ່ນພະທາດຫຼວງ ແລະ ກິດຈະການຕ່າງໆຢູ່ໃນບໍລິເວນອ້ອມຮອບເພື່ອເຄື່ອນໄຫວຕາມປະເພນີ ຂອງການຈັດຕັ້ງສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ, ກະຊວງ-ອົງການ, ຂອງອົງການປົກຄອງ ນະຄອນຫຼວງວຽງຈັນ ແລະ ອົງການຈັດຕັ້ງສັງຄົມ ຕາມການອະນຸຍາດຂອງທາງການ.
9. **ນິຕິກຳໃຊ້ເຂົ້າໃນຂໍ້ຕົກລົງກ່ຽວກັບການປົກປັກຮັກສາ, ການປະຕິສັງຂອນ, ການອະນຸລັກ ສາສະນະສະຖານເຂດນີ້** ແລະ ສາທາລະນະສະຖານເຂດນີ້ ຕາມຂໍ້ທີ 9,10,11 ແລະ 12 ມາດຕາທີ III ຂອງກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ກ່ຽວກັບການກໍ່ສ້າງ, ປົກປັກຮັກສາ, ການບູລະນະ, ການປະຕິສັງຂອນບັນດາກິດຈະການ, ເຄຫະສະຖານອ້ອມຮອບແຕ່ຕ້ອງໃຫ້ກົມກືນກັບສາສະນະສະຖານ, ສາທາລະນະສະຖານຂອງເຂດມໍລະດົກ.
10. **ເຂດມໍລະດົກທາດຫຼວງກວມເອົາເຂດ**: ບູຮານສະຖານ, ສາທາລະນະສະຖານ ແລະ ບໍລິເວນອ້ອມຮອບ.
11. **ທັດສະນີຍະພາບ ແລະ ຄວາມດັ່ງເດີມຂອງເຂດນີ້**: ສ້າງຄຳຄືນທີ່ມີມົນສະເໜ່, ສ້າງຄວາມຈູງໃຈ ແລະ ດຶງດູດປະຊາຊົນຊາວເມືອງ, ແຂກເມືອງເຂົ້າສູ່ບໍລິເວນນີ້; ຮັກສາຄວາມເປັນລະບຽບຮຽບຮ້ອຍ ຄືໃຫ້ມີຄວາມສະອາດ ແລະ ຄວາມປອດໄພ ໃນລະດັບສູງ.

ມາດຕາ 3 ນະໂຍບາຍກ່ຽວກັບ ການຄຸ້ມຄອງສະໜາມຫຼວງ ແລະ ສວນບໍລິເວນອ້ອມຮອບ ພະທາດຫຼວງ

3.1. ລັດສົ່ງເສີມການປົກປັກຮັກສາ ແລະ ອະນຸລັກອົງພະທາດຫຼວງ, ສະໜາມຫຼວງ, ສາສະນະສະຖານ, ສາທາລະນະສະຖານ ຂອບເຂດພະທາດຫຼວງ-ສະໜາມຫຼວງ ແລະ ບໍລິເວນອ້ອມຮອບ;

3.2. ສົ່ງເສີມຫົວຄິດປະດິດແຕ່ງ (ຂຽນປຶ້ມ, ຖ່າຍພາບ, ການອອກແບບເພື່ອເຜີຍແຜ່ ແລະ ສື່ສານກັບເພື່ອນມິດນາໆຊາດ; ເພື່ອໂຄສະນາ ປະຊາສຳພັນຄຸນຄ່າຂອງເຂດດັ່ງກ່າວໃຫ້ສູງເດັ່ນຂຶ້ນ.

3.3. ສົ່ງເສີມການນຳໃຊ້, ການບໍລິການພິພິທະພັນພະທາດຫຼວງ, ສາທາລະນະສະຖານ ໃຫ້ມີປະສິດທິຜົນ, ມີຄຸນປະໂຫຍດ ຖືກຈຸດປະສົງເປົ້າໝາຍ (ຕາມທີ່ກຳນົດໄວ້ໃນມາດຕາທີ 1), ຮັບປະກັນປະເພນີ, ວັດທະນະທຳອັນດີງາມ, ເສີມສ້າງຄວາມສີວິໄລ ແລະ ຄຸນຄ່າທາງດ້ານຈິດໃຈ;

3.4. ສົ່ງເສີມບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບມອບເໝົາ ແລະ ຮັບສຳປະທານສາທາລະນະສະຖານ ແລະ ກິດຈະການຕ່າງໆ ໃຫ້ໄປຕາມແຜນຜັງລວມທີ່ເອກະພາບ ແລະ ກົດໝາຍວ່າດ້ວຍມໍຣະດົກກຳນົດຢ່າງເຂັ້ມງວດ;

3.5. ສົ່ງເສີມບຸກຄົນ, ນິຕິບຸກຄົນ ມີສ່ວນຮ່ວມເຂົ້າໃນການປົກປັກຮັກສາ, ອະນຸລັກ, ປະຕິສັງຂອນພິພິທະພັນພະທາດຫຼວງ, ກິດຈະການສາທາລະນະສະຖານ ແລະ ສາສະນະສະຖານ;

3.6. ລັດຮັບຮູ້ສິດນຳໃຊ້ ແລະ ສິດໃຊ້ເຄຫາສະຖານຕ່າງໆ ແລະ ສົ່ງເສີມໃຫ້ບູລະນະ, ມີການປະຕິສັງຂອນ, ປຸກສ້າງເຄຫາສະຖານໃໝ່ ໃຫ້ມີຮູບຊົງກົມກືນກັບສິລະປະວິຈິດສິນລາວທີ່ເປັນມໍຣະດົກ ແລະ ແກ້ໄຂຈັດສັນຄືນໃໝ່ກິດຈະການທີ່ມີຄວາມບໍ່ເປັນລະບຽບຮຽບຮ້ອຍ ໃຫ້ມີຄວາມສີວິໄລ.

**ມາດຕາ 4 ຫຼັກການ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາສະໜາມຫຼວງ ແລະ ສວນບໍລິເວນອ້ອມຮອບພະທາດຫຼວງ**

1. ເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບຕ້ອງຄຸ້ມຄອງລວມສູນ, ເປັນເອກະພາບ ແລະ ດ້ວຍແຜນຜັງອະນຸລັກຢ່າງເຂັ້ມງວດ, ຖືກປັບປຸງປ່ຽນແປງຕາມການຕົກລົງຂອງລັດຖະບານ ແລະ ມະຕິສະພາປະຊາຊົນ ນະຄອນຫຼວງວຽງຈັນ.
2. ການເຄື່ອນໄຫວຂອງເຂດນີ້ຖືກຕ້ອງສອດຄ່ອງ ຕາມນະໂຍບາຍວັດທະນະທຳ, ກົດໝາຍມໍຣະດົກ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ, ເປັນໄປຕາມມູນເຊື້ອວັດທະນະທຳອັນດີງາມ, ສອດຄ່ອງກັບວິໄສທັດ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງວຽງຈັນ.
3. ການພັດທະນາຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ບົນພື້ນຖານການອະນຸລັກແບບຍືນຍົງ, ປະຊາຊົນມີສ່ວນຮ່ວມ, ຖືກຕາມແຜນຜັງບໍ່ປ່ຽນແປງຕາມລຳພັງ ແລະ ບໍ່ຖືກທຳລາຍມ້າງເພ.
4. ຮັກສາສິ່ງແວດລ້ອມທຳມະຊາດ ທ້ອງຟ້າສົດໃສ, ແສງເດືອນແຈ້ງ.
5. ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນບົນພື້ນຖານຫຼັກສິນທຳ, ສັດທາປາລະມີ ແລະ ຈັນຍາບັນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳຫຼັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີສ່ວນພົວພັນກັບການເຄື່ອນໄຫວໃນຂອບເຂດພື້ນທີ່ຂອງສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.

## ໝວດ 2
## ການກຳນົດຂອບເຂດ ແລະ ອົງປະກອບ

**ມາດຕາ 6 ການກຳນົດຂອບເຂດ**

+ ຂອບເຂດສະໜາມຫຼວງ: ມີເນື້ອທີ່ 98.394 $m^2$; ທິດຕາເວັນອອກຕິດກັບ: ບໍລິສັດ ເພັດຖາວອນ, ເດີ່ນພະທາດຫຼວງ, ວັດທາດຫຼວງເໜືອ, ສະພາແຫ່ງຊາດ ແລະ ທາງຮ່ອມ; ທິດຕາເວັນຕົກຕິດກັບ: ສວນໄຊເສດຖາ, ສວນດາວແດງ ແລະ ສວນໜອງສະພັງເມີນ; ທິດໃຕ້ຕິດກັບ: ຖະໜົນໜອງບອນ; ທິດເໜືອຕິດກັບ: ຖະໜົນໄກສອນ.

+ ຂອບເຂດພະທາດຫຼວງມີເນື້ອທີ່ (ກຳແພງລວມ) 8.895 $m^2$; ຄວາມຍາວດ້ານໃຕ້: 93,20 m; ຄວາມຍາວດ້ານເໜືອ: 93,00 m; ຄວາມຍາວດ້ານຕາເວັນອອກ: 94,50 m; ຄວາມຍາວດ້ານຕາເວັນຕົກ: 96,50 m.

6.1. ຂອບເຂດ ແລະ ກິດຈະການອີງພະທາດຫຼວງປະກອບດ້ວຍ:

6.1.1 ພື້ນທີ່ກຳແພງລວມ ປະກອບດ້ວຍ:

1. ຂອບເຂດລອບນອກຂອງກຳແພງລວມມີເນື້ອທີ່: 8.895 $m^2$
2. ທາງຍ່າງໃນກຳແພງລວມມີເນື້ອທີ່: 1.658 $m^2$
3. ເດີ່ນຫຍ້າອ້ອມຮອບຕີນພະທາດຫຼວງມີເນື້ອທີ່: 3.502 $m^2$
4. ເນື້ອທີ່ໜ່ວຍພະທາດຫຼວງ: 3.735 $m^2$
5. ເນື້ອທີ່ຊັ້ນ 2 ພະທາດຫຼວງ: 1.839 $m^2$
6. ເນື້ອທີ່ຊັ້ນ 3 ພະທາດຫຼວງ: 1.095 $m^2$
7. ລວງສູງ: 45 m
8. ພະທາດທຳມະສີຫາຍໂສກ (ຂະໜາດອີງ 1,70 m x1,70 m = 2,89 $m^2$)
9. ພະທາດປາລະມີ 30 ອົງ
10. ຫໍໄຫວ້ 04 ທິດ
11. ສະໜາມຫຍ້າກຳແພງລວມດ້ານໃນ
12. ພຣະພຸດທະຮູບຄຳ (ໜັກ 9,45 g) ມີນາມວ່າ: ພຣະພຸດທະສຸວັນສາທາທັມມິກະລາດ, ພຣະທົນປະໂກໄດ, (ພຣະພຸດທະຮູບປາງຊະນະມານ).
13. ວັດຖຸພັນຕ່າງໆ (ມີບັນຊີຕິດຂັດ)

6.1.2 ບັນດາກິດຈະການປະຈຸບັນ: ອີງພະທາດຫຼວງ, ກິດຈະການສິ່ງອຳນວຍອື່ນໆ, ອຸປະກອນໄຟຟ້າ, ອຸປະກອນສິນລະປະຕ່າງໆ (ມີບັນຊີຕິດຂັດ)

6.2 ຫໍທຳມະສະພາ (ມີບັນຊີຕິດຂັດ)

6.3 ວັດທາດຫຼວງເໜືອ

6.4 ວັດທາດຫຼວງໃຕ້

ມາດຕາ 7 ອີງປະກອບອື່ນໆປະກອບດ້ວຍ:

1. ເຂດສວນໄຊເສດຖາ, ສວນໜອງສະພັງເລັນ ແລະ ສວນອະນຸສາວະລີນັກຮົບນິລະນາມ ມີເນື້ອທີ່: 79.613 $m^2$
2. ເຂດເດີ່ນ ແລະ ສວນອະນຸສາວະລີເຈົ້າໄຊເສດຖາ, (ສວນດ້ານໜ້າຫໍທຳມະສະພາ) ມີເນື້ອທີ່: 7.185 $m^2$
3. ເຂດເດີ່ນອ້ອມວັດທາດຫຼວງໃຕ້ ມີເນື້ອທີ່: 12.557 $m^2$
4. ເນື້ອທີ່ຂອງວັດທາດຫຼວງໃຕ້: 11,388 $m^2$
5. ເດີ່ນດ້ານໜ້າກຳແພງລວມພະທາດຫຼວງດ້ານຕາເວັນອອກ ມີເນື້ອທີ່: 13.906 $m^2$
6. ເຂດເດີ່ນອ້ອມວັດທາດຫຼວງເໜືອ ມີເນື້ອທີ່: 30.662 $m^2$

ໝວດທີ 3

ການນຳໃຊ້ ແລະ ການບໍລິການສາທາລະນະສະຖານ ແລະ ສາສະນະສະຖານ

ມາດຕາ 8 ການນຳໃຊ້ເຂດສະໜາມຫຼວງ, ສວນໄຊເສດຖາ, ສວນໜອງສະພັງເລັບ ແລະ ສວນອານຸສາວະລີ ນັກຮົບນິລະນາມ.

ເຂດສະໜາມຫຼວງ ແລະ ບໍລິເວນອ້ອມຮອບ ມີເນື້ອທີ່ກ້ວາງຂວາງ ແມ່ນໃຫ້ຮັກສາເປັນເດີ່ນຮາບກ້ຽງ, ຮັກສາຮູບແບບເດີມຂອງສວນດອກໄມ້ ແລະ ບໍ່ໃຫ້ມີການກໍ່ສ້າງໃດໆເພີ່ມເຕີມຢ່າງເດັດຂາດ, ຖ້າມີຄວາມຈຳເປັນໃນການຈັດສັນຕົບແຕ່ງເພື່ອຮັບໃຊ້ກິດຈະກຳຕ່າງໆ ແມ່ນໃຫ້ເຮັດແບບບໍ່ຖາວອນ (ສາມາດເລີກຮື້ໄດ້) ການນຳໃຊ້ຕາມການຈັດສັນພື້ນທີ່ຊື່ງລະອຽດມີດັ່ງລຸ່ມນີ້:

1. ເຂດສະໜາມຫຼວງ

ຮັບໃຊ້ການຈັດຕັ້ງເຄື່ອນໄຫວວຽກງານທີ່ສຳຄັນຂອງຊາດ, ຂອງພັກ ແລະ ຮັບໃຊ້ ການເຄື່ອນ ໄຫວກິດຈະກຳສຳຄັນ ຂອງນະຄອນຫຼວງວຽງຈັນ ທັງເປັນສະຖານທີ່ພັກຜ່ອນອອກກຳລັງກາຍຂອງມວນຊົນ ໄດ້ແບ່ງອອກເປັນ 04 ເຂດ ດັ່ງນີ້:

1.1. ເຂດ A: ທາງດ້ານເໜືອ ນັບແຕ່ແຈຕຶກຖະໜົນໄກສອນພົມວິຫານ ມາຫາທາງເຂົ້າສະພາແຫ່ງຊາດດ້ານເໜືອ ໃນຍາມປົກກະຕິແມ່ນສະຫງວນໃຫ້ເປັນເດີ່ນເພື່ອເປັນບ່ອນພັກຜ່ອນ, ອອກກຳລັງກາຍ, ໃນຍາມມີບຸນ ຫຼື ເທດສະການຈະນຳໃຊ້ເປັນບ່ອນວາງສະແດງ ແລະ ຈຳໜ່າຍສິນຄ້າທີ່ເປັນຜະລິດຕະພັນພາຍໃນສິນຄ້າ ODOP.

1.2. ເຂດ B: ເດີ່ນທາງເຂົ້າສະພາແຫ່ງຊາດ ເວລາປົກກະຕິແມ່ນເປັນທາງເຂົ້າອອກຂອງພາຫະນະຂອງສະພາແຫ່ງຊາດ. ໃນຍາມບຸນ, ເທດສະການ ຮັບໃຊ້ເປັນບ່ອນຈອດລົດຂອງແຂກການນຳ ແລະ ຄະນະກຳມະການຈັດງານ.

1.3. ເຂດ C: ນັບແຕ່ແຈສະພາແຫ່ງຊາດດ້ານໃຕ້ຫາປະຕູທາງເຂົ້າສວນອານຸສາວະລີເຈົ້າໄຊເສດຖາ ເປັນສະໜາມທີ່ກ້ວາງຂວາງແມ່ນສະຫງວນໄວ້ເປັນທີ່ເປົ່າຫວ່າງໃຫ້ມວນຊົນໄດ້ເຄື່ອນໄຫວໄປມາມີຄວາມສະດວກ ແລະ ເປັນທາງແຫ່ຂະບວນແຫ່ຜາສາດເຜີ້ງໃນງານບຸນນະມັດສະການພະທາດຫຼວງທາດຫຼວງປະຈຳປີ.

1.4. ເຂດ D: ແມ່ນນັບແຕ່ທາງເຂົ້າປະຕູສວນອານຸສາວະລີເຈົ້າໄຊເສດຖາຫາກຳແພງຮົ້ວສະຖານີໄຟຟ້າເຂດທາດຫຼວງ ເຂດດັ່ງເດີມແມ່ນຮັບໃຊ້ເປັນສະຖານທີ່ປີງສິບບຸກຄົນສຳຄັນຂອງຊາດ ແລະ ປະທານອົງການສູນກາງພຸດທະສາສະໜາ, ຈັດພິທີທາງສາສະໜາ ແລະ ເປັນບ່ອນຕັ້ງເວທີສິລະປະມວນຊົນ (ເວທີກາງ), ບ່ອນຕີຄີໃນງານບຸນນະມັດສະການທາດຫຼວງ.

2. ສວນໄຊເສດຖາ

ໃຫ້ຮັກສາເປັນເດີ່ນຮາບກ້ຽງ, ຮັກສາຮູບແບບເດີມຂອງສວນດອກໄມ້ ແລະ ບໍ່ໃຫ້ມີການກໍ່ສ້າງຕໍ່ເຕີມໃດໆຢ່າງເດັດຂາດ ໃນໂອກາດວັນສຳຄັນຂອງຊາດ ຂອງພັກ ຕ້ອງໄດ້ມີການຕົບແຕ່ງ, ປະດັບປະດາດ້ວຍໄຟ, ແສງ, ສີ ໃຫ້ຮຸ່ງແຈ້ງ ຈົບງາມ.

3. ສວນໜອງສະພັງເລັບ

ໃຫ້ຮັກສາເປັນສວນດອກໄມ້ ແລະ ຮັກສາຮູບແບບເດີມຂອງສວນທີ່ຈັດສັນຜ່ານມາ, ຖ້າມີຄວາມຈຳເປັນໃນການຈັດສັນຕົບແຕ່ງເພື່ອຮັບໃຊ້ກິດຈະກຳບໍລິການແມ່ນໃຫ້ເຮັດແບບບໍ່ຖາວອນ (ສາມາດເລີກຮື້ໄດ້), ການບໍລິການແມ່ນໃຫ້ບໍລິການດ້ານອາຫານລາວ, ນ້ຳຊາ, ກາເຟ, ເຄື່ອງທີ່ລະນຶກ.

4. **ສວນອະນຸສາວະລີນັກຮົບນິລະນາມ**

ໃຫ້ຮັກສາເປັນສວນທີ່ສວຍງາມ ເພື່ອຍົກສູງຄຸນຄ່າຂອງອານຸສາວະລີນັກຮົບນິລະນາມ, ເດັດຂາດບໍ່ໃຫ້ມີສິ່ງປຸກສ້າງ ແລະ ການບໍລິການໃດໆ.

5. **ເຂດສວນອານຸສາວະລີເຈົ້າໄຊເສດຖາທິລາດ, ຫໍທຳມະສະພາ ແລະ ສວນຕໍ່ໜ້າຫໍທຳມະສະພາ**

ເຂດເດີ່ນ ແລະ ສວນອ້ອມຮອບ ວັດທາດຫຼວງເໜືອ, ເດີ່ນຕາເວັນອອກ ເປັນອົງປະກອບໜຶ່ງຂອງພິພິທະພັນພະທາດຫຼວງ ເພື່ອເປັນການສ້າງສະພາບແວດລ້ອມ ແລະ ທິວທັດອັນງົດງາມ ໃຫ້ແກ່ແຫຼ່ງທ່ອງທ່ຽວພະທາດຫຼວງ ເຂດດັ່ງກ່າວ ໃຫ້ຈັດສັນເປັນສວນ, ມີການຕົບແຕ່ງໃຫ້ສະອາດຈົບງາມ, ກົມກືນກັບສັນຍາລັກທາງດ້ານວັດທະນະທຳ ແລະ ການພັດທະນາຕ້ອງໃຫ້ສອດຄ່ອງຕາມກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ ຫ້າມເດັດຂາດບໍ່ໃຫ້ມີການບໍລິການໃດໆ.

6. **ເຂດເດີ່ນອ້ອມວັດທາດຫຼວງໃຕ້**

ສາມາດພັດທະນາ, ຈັດສັນ ເປັນສະຖານທີ່ບໍລິການເຊັ່ນ: ຫ້ອງນ້ຳສາທາລະນະ, ຮ້ານຄ້າຂາຍ ເຄື່ອງທີ່ລະນຶກ ແລະ ການເຄື່ອນໄຫວກິດຈະກຳຕ່າງໆ ທີ່ເປັນການສົ່ງເສີມແຫຼ່ງທ່ອງທ່ຽວພະທາດຫຼວງ.

7. **ເດີ່ນຕໍ່ໜ້າກົມມະລຽນພະທາດຫຼວງດ້ານຕາເວັນອອກ**

ສາມາດຈັດສັນ ເປັນສະຖານທີ່ບໍລິການເຊັ່ນ: ຮ້ານຂາຍເຄື່ອງທີ່ລະນຶກ, ເຄື່ອງສັກກະລະບູຊາ ແລະ ການເຄື່ອນໄຫວກິດຈະກຳຕ່າງໆ ທີ່ເປັນການສົ່ງເສີມແຫຼ່ງທ່ອງທ່ຽວພະທາດຫຼວງ.

8. **ເຂດເດີ່ນອ້ອມຮອບວັດທາດຫຼວງເໜືອ**

ຈັດຕັ້ງເຄື່ອນໄຫວເທດສະການທາງດ້ານສາສະໜາ, ວັດທະນະທຳ ແລະ ທ່ອງທ່ຽວ; ຮັບໃຊ້ ກິດຈະກຳສາທາລະປະໂຫຍດທີ່ສຳຄັນ ຕາມການອະນຸລັກຂອງລັດຖະບານ ແລະ ອົງການປົກຄອງ ນະຄອນຫຼວງວຽງຈັນ.

9. **ເຂດບໍລິເວນອ້ອມຮອບພະທາດຫຼວງ-ສະໜາມຫຼວງ ຊຶ່ງປະກອບດ້ວຍບັນດາບ້ານທີ່ລະບຸໄວ້ໃນມາດຕາ 2 ຂໍ້ 4 ຕ້ອງມີການຄຸ້ມຄອງການປຸກສ້າງ ແລະ ຈັດສັນຢ່າງລວມສູນເປັນຕົ້ນ:**

- ຄວາມສູງຂອງເຮືອນ ແລະ ອາຄານເຄຫາສະຖານ ໃນລັດສະໝີ 100 ແມັດ ບໍ່ໃຫ້ສູງເກີນ 20 ແມັດ.
- ແບບປຸກສ້າງຕ້ອງເປັນແບບກະລາຊິກກົມກືນກັບພະທາດຫຼວງ
- ການບໍລິການໃນບໍລິເວນອ້ອມຂ້າງພະທາດຫຼວງ-ສະໜາມຫຼວງ ບໍ່ສົ່ງເສີມສິ່ງມືນເມົາ ໃຫ້ບໍລິການສິນຄ້າແບບວັດທະນະທຳ ທີ່ພົວພັນເຖິງວັດຖຸບູຮານ ເພື່ອສ້າງເຂດນີ້ໃຫ້ເປັນອັນຍະມະນີຂອງວຽງຈັນ.

**ມາດຕາ 9 ກິດຈະການທ່ອງທ່ຽວ-ການພັກຜ່ອນ**

ເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບແມ່ນສົ່ງເສີມນຳໃຊ້ເຂົ້າໃນກິດຈະກຳການທ່ອງທ່ຽວແບບອະນຸລັກ, ຊຸມຊົນມີສ່ວນຮ່ວມ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ໄດ້ເຂົ້າທ່ຽວຊົມພິພິທະພັນພະທາດຫຼວງ ນັບແຕ່ ວັນຈັນ-ວັນອາທິດ ເລີ່ມແຕ່ເວລາ 08:00-21:30 ໂມງ ຂອງທຸກວັນ, ໂດຍທີ່ນັກທ່ອງທ່ຽວຕ້ອງໄດ້ປະຕິບັດພັນທະຊື້ປີ້ເຂົ້າຊົມຕາມລາຄາທີ່ໄດ້ກຳນົດໄວ້.

ນອກຈາກນັ້ນເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບຍັງສົ່ງເສີມໃຫ້ເປັນບ່ອນພັກຜ່ອນຍ່ອນອາລົມຂອງຊຸມຊົນເປັນຕົ້ນແມ່ນການອອກກຳລັງກາຍ, ຍ່າງ, ແລ່ນ, ເຕັ້ນເອໂລບິກ...

**ມາດຕາ 10 ກິດຈະກຳການຊື້ຂາຍ**

ເນື່ອງຈາກເຂດດັ່ງກ່າວເປັນເຂດອານຸລັກເພື່ອການທ່ອງທ່ຽວ, ການພັກຜ່ອນ ກິດຈະກໍາຊື້-ຂາຍ ແມ່ນເລີ່ມຕົ້ນການບໍລິການເຄື່ອງດື່ມ (ຍົກເວັ້ນທາດເຫຼົ້າ) ອາຫານລາວ, ເຄື່ອງທີ່ລະນຶກ (ຍົກເວັ້ນສິນຄ້າຫັດຖະກໍາ, ເຄື່ອງບູຊາ ແລະ ເຄື່ອງຈໍາລອງແບບຂອງຕ່າງປະເທດ) ແລະ ສະເພາະງານບຸນ ຫຼື ເທດສະການຈະມີຂໍ້ກໍານົດແນະນໍາຕ່າງຫາກ.

**ມາດຕາ 11 ການນໍາໃຊ້ສາສະນະສະຖານ**

ສົ່ງເສີມການນໍາໃຊ້ຫໍທໍາມະສະພາ, ວັດທາດຫຼວງເໜືອ, ວັດທາດຫຼວງໃຕ້ ແລະ ພິພິທະພັນພະທາດຫຼວງ ເພື່ອເຄື່ອນໄຫວກິດຈະກໍາທາງດ້ານສາສະໜາ ແລະ ໜູນໃຊ້ກິດຈະກໍາທາງດ້ານສາສະໜາປະກອບສ່ວນເຂົ້າໃນການສ້າງສີສັນການ ທ່ອງທ່ຽວ ແລະ ຮີດຄອງປະເພນີ ໃຫ້ມີຫຼາຍຮູບຫຼາຍສີສັນເປັນຕົ້ນແມ່ນທຸກວັນສິນໃຫຍ່ແມ່ນຈັດໃຫ້ມີໄຫວ້ພຣະຮັບສິນ.

**ມາດຕາ 12 ແສງສະຫວ່າງ**

ຕ້ອງຮັບປະກັນໃຫ້ທຸກພື້ນທີ່ຂອງຂອບເຂດດັ່ງກ່າວມີຄວາມຮຸ່ງແຈ້ງສະຫວ່າງທັງກາງເວັນ ແລະ ກາງ ຄືນໂດຍນໍາໃຊ້ເຕັກໂນໂລຊີທັນສະໄໝ ທີ່ຮັບປະກັນຄຸນນະພາບຂອງແສງສະຫວ່າງ, ແຕ່ປະຢັດກະແສໄຟຟ້າ, ໃນນີ້ຖືເອົາແສງສະຫວ່າງທໍາມະຊາດເປັນຕົ້ນແມ່ນຍາມເດືອນເພັງ (ວັນເພັງ 13 ຄໍ່າ ເດືອນ 12 ລາວ) ໃຫ້ເປັນສີສັນຂອງການຊົມທີ່ໂດດເດັ່ນ.

## ໝວດທີ 4
## ອົງການຄຸ້ມຄອງ

**ມາດຕາ 13 ອົງການຄຸ້ມຄອງເຂດມໍລະດົກພະທາດຫຼວງ**

ອົງການຄຸ້ມຄອງ ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນ ອ້ອມຮອບພະທາດຫຼວງປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຕາງໜ້າໂດຍ (ກົມມໍລະດົກ)
2. ອົງການປົກຄອງ ນະຄອນຫຼວງວຽງຈັນ.
3. ອົງການປົກຄອງ ເມືອງໄຊເສດຖາ.
4. ອົງການພຸດທະສາສະໜາສໍາພັນລາວ, ຕາງໜ້າໃນນາມຄະນະສົງວັດທາດຫຼວງເໜືອ-ຄະນະສົງວັດທາດຫຼວງໃຕ້.
5. ຫ້ອງການ ຫຼື ໜ່ວຍງານຄຸ້ມຄອງສະໜາມຫຼວງ-ອົງພະທາດຫຼວງ
6. ບໍລິສັດ ຜູ້ຮັບເໝົາ

**ມາດຕາ 14 ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ**

**14.1. ກະຊວງຖະແຫຼງຂ່າວ, ວັດຖະນະທໍາ ແລະ ທ່ອງທ່ຽວ (ກົມມໍລະດົກ):**

- ຮັບຜິດຊອບໂດຍກົງຕໍ່ມໍລະດົກລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ.
- ຊີ້ນໍາ, ຊຸກຍູ້, ຕິດຕາມ, ກວດກາ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ການຄຸ້ມຄອງ, ແຜນການ, ໂຄງການກ່ຽວກັບມໍລະດົກແຫ່ງຊາດ.
- ສະຫຼຸບລາຍງານ ແລະ ປະເມີນຜົນການໃນການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດຕໍ່ລັດຖະບານ ແລະ ຢ່າງເປັນປົກກະຕິ.
- ຄຸ້ມຄອງຕາມ ວິຊາການມໍລະດົກ, ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມມາດຕາ 82 ກົດໝາຍມໍລະດົກແຫ່ງຊາດກໍານົດໄວ້.

14.2. ອົງການປົກຄອງນະຄອນຫຼວງວຽງຈັນ:

- ຮັບຜິດຊອບຕໍ່ກັບລັດຖະບານ ຕໍ່ກັບການປະຕິບັດກົດໝາຍມໍລະດົກ ມາດຕາ 64 ກ່ຽວກັບເຂດມໍລະດົກພະທາດຫຼວງ.
- ຮັບຜິດຊອບຕໍ່ກັບສະພາປະຊາຊົນ ນະຄອນຫຼວງວຽງຈັນ ກ່ຽວກັບການບໍລິການ, ການເຄື່ອນໄຫວ, ຜົນໄດ້ ແລະ ຜົນເສຍ ໃນການປະຕິບັດຂໍ້ຕົກລົງສະບັບນີ້.
- ມີສິດປັບປຸງປ່ຽນແປງ ຫຼື ນຳສະເໜີລັດຖະບານໃນການອອກນິຕິກຳສະບັບໃໝ່

14.3. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ.

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ເປັນໃຈກາງໃນການຄຸ້ມຄອງ, ອານຸລັກ, ປົກປັກຮັກສາ, ບູລະນະ ແລະ ປະຕິສັງຂອນ ເພື່ອຮັບປະກັນໃຫ້ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ມີຄວາມເປັນລະບຽບຮຽບຮ້ອຍສະອາດ, ຈົບງາມ, ມີຄວາມຍືນຍົງ ແລະ ເສີມຂະຫຍາຍຄຸນຄ່າມໍລະດົກໃຫ້ສູງຂຶ້ນ, ໂດຍແຕ່ງຕັ້ງໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິຫານມໍລະດົກພິພິທະພັນພະທາດຫຼວງ ເປັນຕົວແທນໃນການບໍລິຫານຢ່າງຮອບດ້ານ ແລະ ມີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງໄຊເສດຖາ, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ, ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ອົງການພຸດທະສາສະໜາສຳພັນລາວ ແລະ ບໍລິສັດ ຜູ້ຮັບເໝົາ

14.4. ພະແນກໂຍທາທິການ ແລະຂົນສົ່ງ ນະຄອນຫຼວງວຽງຈັນ.

- ປະສານສົມທົບກັບ ສະຖາບັນເຄຫາຜັງເມືອງ, ກົມເຄຫາຜັງເມືອງ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສຳຫຼວດອອກແບບແຜນຜັງຂອບເຂດສະໜາມຫຼວງ ແລະ ບໍລິເວນອ້ອມຮອບພະທາດຫຼວງ.
- ວາງລະບຽບການ ກ່ຽວກັບການຄຸ້ມຄອງການອອກແບບສິ່ງປຸກສ້າງ, ການປຸກສ້າງ ອາຄານ-ບ້ານເຮືອນ, ການກໍ່ສ້າງໃນຂອບເຂດສະໜາມຫຼວງ ແລະ ບໍລິເວນອ້ອມຮອບພະທາດຫຼວງ.
- ວາງລະບຽບການ ໃນການຈັດການສັນຈອນ, ຄວາມເປັນລະບຽບຮຽບຮ້ອຍ ໃນສະໜາມຫຼວງ ແລະ ບໍລິເວນອ້ອມຮອບພະທາດຫຼວງ.

14.5. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ.

- ສຳຫຼວດເກັບກຳຂໍ້ມູນລະອຽດ ກ່ຽວກັບຂອບເຂດເນື້ອທີ່ດິນ ໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.
- ປັກຫຼັກໝາຍ ແລະ ອອກສິດນຳໃຊ້ກຳນົດເນື້ອທີ່ດິນໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບໃຫ້ຊັດເຈນແນ່ນອນ.

14.6. ອົງການປົກຄອງເມືອງໄຊເສດຖາ.

- ນຳພາອົງການຈັດຕັ້ງ, ພໍ່ແມ່ປະຊາຊົນພາຍໃນເມືອງເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາພະທາດຫຼວງ, ນຳໃຊ້ສະໜາມຫຼວງ ແລະ ບໍລິເວນອ້ອມຮອບ ພະທາດຫຼວງວຽງຈັນ.
- ມີສ່ວນຮ່ວມໃນການວາງແຜນຍຸດທະສາດ ໃນການປົກປັກຮັກສາ ແລະ ພັດທະນາ, ບູລະນະປະຕິສັງ ຂອນເປັນແຕ່ລະໄລຍະ ຕາມທິດຊີ້ນຳຂອງຂັ້ນເທິງ, ມອບຄວາມຮັບຜິດຊອບ ໃຫ້ບັນດາຫ້ອງການ, ຫ້ອງການທຽບເທົ່າພາຍໃນເມືອງ ແລະ ອຳນາດການປົກຄອງບ້ານ ນຳໄປຈັດຕັ້ງຜັນຂະຫຍາຍເປັນແຜນງານລະອຽດໃນການຄຸ້ມຄອງ, ນຳໃຊ້ສະໜາມຫຼວງ ແລະ ເຂດບໍລິເວນອ້ອມຮອບພະທາດຫຼວງວຽງຈັນ.

14.7. ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ.

- ຮັບຜິດຊອບຊີ້ນຳ ນຳພາ ການອານາໄມໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ນັບທັງໄລຍະປົກກະຕິ ແລະ ໄລຍະມີງານທີ່ສຳຄັນ.
- ຊີ້ນຳແຕ່ລະພາກສ່ວນ ທີ່ໄດ້ຮັບມອບໝາຍໃຫ້ຮັບຜິດຊອບ ສວນສາທາລະນະ ໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.
- ເອົາໃຈໃສ່ຕິດຕາມ ການປະດັບປະດາ ໄຟແສງສະຫວ່າງ, ການເກັບມ້ຽນຂີ້ເຫຍື້ອ ແລະ ຄວາມສະອາດສວຍງາມ ໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.

14.8. ພະແນກການເງິນ ນະຄອນຫຼວງວຽງຈັນ

- ຮັບຜິດຊອບຊີ້ນຳໃນການຂຸດຄົ້ນທ່າແຮງ ເພື່ອຈັດເກັບລາຍຮັບໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.
- ກວດກາຄຸ້ມຄອງການຂຶ້ນແຜນລາຍຈ່າຍ ເຂົ້າໃນວຽກງານຕ່າງໆຂອງຫ້ອງການຄຸ້ມຄອງມໍລະດົກພະທາດຫຼວງ.
- ປັບປຸງກົນໄກການຂາຍປີ້ເຂົ້າຊົມພະທາດຫຼວງຂອງນັກທ່ອງທ່ຽວໃຫ້ນັບມື້ທັນສະໄໝ.

14.9. ອົງການພຸດທະສາສະໜາສຳພັນລາວ, ຄະນະສົງວັດທາດຫຼວງເໜືອ, ຄະນະສົງວັດທາດຫຼວງໃຕ້.

**14.9.1. ອົງການພຸດທະສາສະໜາສຳພັນລາວ**

ແມ່ນຜູ້ຮັບຜິດຊອບຄຸ້ມຄອງໂດຍກົງຕໍ່ກັບທຳທຳມະສະພາ, ເດີ່ນໜ້າທຳທຳມະສະພາ, ສາສະນະສະຖານຂອງອົງການພຸດທະສາສະໜາ ແລະ ກຸຕິພະອາຈານໃຫຍ່ ວິຈິດ ສິງຫາຣາດ.

**14.9.2. ຄະນະສົງວັດທາດຫຼວງເໜືອ**

ແມ່ນຮັບຜິດຊອບຄຸ້ມຄອງສິມວັດທາດຫຼວງເໜືອ, ກຸຕິ ແລະ ສວນໜ້າສິມ

**14.9.3. ຄະນະສົງວັດທາດຫຼວງໃຕ້**

ຮັບຜິດຊອບຄຸ້ມຄອງພາຍໃນຂອບເຂດວັດທາດຫຼວງໃຕ້ (ຂອບເຂດດ້ານໃນກຳແພງວັດ)

**ນອກຈາກນັ້ນຍັງໄດ້ປະກອບສ່ວນເຂົ້າໃນວຽກງານລວມດັ່ງນີ້:**

- ມີສ່ວນຮ່ວມໃນການອອກກົດລະບຽບໃນການຄຸ້ມຄອງການກໍ່ສ້າງ, ບູລະນະປະຕິສັງຂອນ ແລະ ສ້ອມແປງສິ່ງຕ່າງໆທີ່ຮັບຜິດຊອບ ເຊິ່ງບໍ່ຂັດຕໍ່ພຣະທັມມະວິໄນ, ທັມມະນູນປົກຄອງສົງ ແລະ ລະບຽບກົດໝາຍຂອງບ້ານເມືອງ, ໃຫ້ຄວາມສະດວກຕາມສົມຄວນ ແກ່ການບຳເພັນບຸນກຸສົນຂອງປະຊາຊົນໃນຂອບເຂດວັດຂອງຕົນ.
- ມີສ່ວນຮ່ວມໃນການປົກປັກຮັກສາມູນມໍຣະດົກ ທີ່ເປັນສາສະນະສົມບັດອັນລ້ຳຄ່າ ທາງພຸດທະສາສະໜາ ໄວ້ໃຫ້ໝັ້ນຄົງຊົ່ວກາລະນານ ກໍຄືການບູລະນະສ້າງສາພັດທະນາ ວັດວາອາຣາມຕະຫຼອດເຖິງວັດ ທະນະທຳຮີດຄອງປະເພນີ ແລະ ພິທີການທາງພຸດທະສາສະໜາ ໃຫ້ຮຸ່ງເຮືອງສີວິໄລ ເພື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ກໍຄື ນະຄອນຫຼວງວຽງຈັນ ວາງອອກ.
- ເຈົ້າອະທິການພ້ອມດ້ວຍຄະນະມີສ່ວນຮ່ວມ ແລະ ມີຄວາມຮັບຜິດຊອບໃນການຄຸ້ມຄອງ, ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນບໍລິເວນວັດ ແລະ ບໍລິເວນອ້ອມຮອບໃຫ້ມີຄວາມສະອາດຈົບງາມໂດຍມີການມອບໝາຍຂອບເຂດ, ສິດ, ຄວາມຮັບຜິດຊອບ ຂອງແຕ່ລະພາກສ່ວນພາຍໃນວັດ ຢ່າງລະອຽດ.

## ໝວດທີ 5

## ການແບ່ງງານ ແລະ ກົນໄກບໍລິການບາງກິດຈະການສາຄັນ

**ມາດຕາ 15 ຂອບເຂດເດີ່ນພະທາດຫຼວງ ກົມມະລຽນຊັ້ນໃນ, ອານຸສາວະລີ ສວນເຈົ້າໄຊເສດຖາ.**

ແມ່ນຄວາມຮັບຜິດຊອບໂດຍກົງຂອງຫ້ອງການມໍລະດົກພະທາດຫຼວງ ໂດຍພາຍໃຕ້ການຊີ້ນໍາຂອງ ກົມມໍລະດົກ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, ເຊິ່ງກົນໄກການບໍລິການຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ແລະ ລະບຽບການຄຸ້ມຄອງ, ນໍາໃຊ້ ທີ່ໄດ້ລະບຸໄວ້ໃນມາດຕາທີ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ສວນໜອງສະພັງເລນ**

- ສວນໜອງສະພັງເລນ (ທີ່ດິນ, ຮ້ານຄ້າ ແລະ ໜອງນໍ້າ) ແມ່ນຄວາມຮັບຜິດຊອບໂດຍກົງຂອງ ບໍລິສັດ ເພັດບັນດິດ ເຊິ່ງເປັນຜູ້ໄດ້ຮັບສິດຮັບເໝົາຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ຕາມສັນຍາ ວັນທີ 14 ມິຖຸນາ 2011 (ອາຍຸການສໍາປະທານແມ່ນ 30 ປີ) ໃນໄລຍະອາຍຸການຮັບເໝົາຕ້ອງປະຕິບັດຕາມເນື້ອໃນທີ່ລະບຸໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.
- ສໍາລັບກິດຈະການຮ້ານຂາຍເຄື່ອງຫັດຖະກໍາ, ຂອງທີ່ລະນຶກ ແລະ ກິດຈະການກ່ຽວກັບການໃຫ້ບໍລິການຫ້ອງນໍ້າ ທີ່ຕັ້ງຢູ່ບ້ານທາດຫຼວງໃຕ້ ນໍາໃຊ້ຕາມສັນຍາເບື້ອງຕົ້ນ ວັນທີ 05 ຕຸລາ 2012 (ອາຍຸການສໍາປະທານແມ່ນ 30 ປີ).

**ມາດຕາ 17 ສວນໄຊເສດຖາ**

ສວນໄຊເສດຖາແມ່ນຄວາມຮັບຜິດຊອບໂດຍກົງຂອງ ບໍລິສັດ ຄໍາເສັງ ເຊິ່ງເປັນຜູ້ຮັບຜິດຊອບຄຸ້ມຄອງ ແລະ ບົວລະບັດຮັກສາຮັກສາເຂດສວນໄຊເສດຖາ ແລະ ສວນດາວແດງ, ໃນກໍານົດໄລຍະເວລາ 3 ປີ (ນັບແຕ່ເດືອນ 8/2015-8/2018) ຕາມຂໍ້ຕົກລົງເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 1126/ຈນວ, ລົງວັນທີ 5 ພະຈິກ 2015 ແລະ ຈະສິ້ນສຸດໃນເດືອນ ສິງຫາ(8) 2018 ເມື່ອສິ້ນສຸດສັນຍາແລ້ວໃຫ້ດໍາເນີນການປະມູນການມອບໝາຍຄືນໃໝ່ ແລະ ປະຕິບັດຕໍ່ໄດ້. ຕາມມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 18 ເດີ່ນພະທາດຫຼວງດ້ານເໜືອ**

ເດີ່ນພະທາດຫຼວງດ້ານເໜືອແມ່ນຄວາມຮັບຜິດຊອບຊົ່ວຄາວຂອງ ບໍລິສັດ ຊີເອັນພີ ແຈ້ງການຂອງຫ້ອງວ່າການນະຄອນຫຼວງ ສະບັບເລກທີ 2116/ຫວກ.ນວ, ລົງວັນທີ 24 ພະຈິກ 2016 ແລະ ການເຄື່ອນໄຫວຂອງບໍລິສັດນີ້ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ກົດໝາຍກ່ຽວຂ້ອງອື່ນ.

**ມາດຕາ 19 ເດີ່ນພະທາດຫຼວງດ້ານໃຕ້**

ເດີ່ນພະທາດຫຼວງດ້ານໃຕ້ແມ່ນຄວາມຮັບຜິດຊອບຂອງ ບໍລິສັດ ເພັດຖາວອນ ເຊິ່ງໄດ້ຮັບການມອບໝາຍໃຫ້ບົວລະບັດ, ປົກປັກຮັກສາໃນຂອບເຂດ ບໍລິເວນ ສວນດ້ານໃຕ້, ເຮືອນບໍລິການ ແລະ ຫ້ອງນໍ້າຂອງບໍລິສັດເພັດຖາວອນ ແລະ ນໍ້າສ້າງພະຍານາກ ໃນນັ້ນ ໃຫ້ປະຕິບັດຕາມລະບຽບການທີ່ໄດ້ກໍານົດ ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 20 ຜູ້ປະກອບການອື່ນໆ**

ຜູ້ປະກອບການອື່ນໆທີ່ໄດ້ຮັບການອະນຸມັດຈາກການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າມາເຄື່ອນໄຫວບໍລິການໃນຂອບເຂດສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບຈະເປັນຮູບການຮັບເໝົາ, ເຊົ່າສະຖານທີ່ ລ້ວນແຕ່ຕ້ອງໄດ້ປະຕິບັດຕາມກົດໝາຍເຂດມໍລະດົກ ແລະ ລະບຽບການຂອງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

## ໝວດທີ 6

## ອົງການກວດກາ

**ມາດຕາ 21 ອົງການກວດກາ.**

ອົງການກວດກາການຄຸ້ມຄອງສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ປະກອບດ້ວຍອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

21.1. ອົງການກວດກາພາຍໃນ

ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງ ຕາມທີ່ລະບຸໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

21.2. ອົງການກວດກາພາຍນອກ

- ກົມມໍລະດົກຮັບຜິດຊອບກົດໝາຍມໍລະດົກ, ການບໍລິການ ແລະ ການເຄື່ອນໄຫວວັດທະນະທຳ.
- ສະພາແຫ່ງຊາດ, ສະພາປະຊາຊົນ ນະຄອນຫຼວງວຽງຈັນ.
- ອົງການກວດກາລັດ
- ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
- ຂະແໜງອື່ນໆທີ່ກ່ຽວຂ້ອງ
- ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 22 ສິດ ແລະໜ້າທີ່ ຂອງອົງການກວດກາ.**

- ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.
- ກວດກາການເຄື່ອນໄຫວວຽກງານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງທີ່ກ່ຽວກັບການຄຸ້ມຄອງສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.
- ສະເໜີການຈັດຕັ້ງທີ່ກ່ຽວຂ້ອງອອກຄຳສັ່ງແນະນຳ ຫຼື ລະບຽບການລະອຽດໃນການຈັດຕັ້ງປະຕິບັດ.
- ພ້ອມກັນປະສານສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງໃນການແກ້ໄຂກໍລະນີມີເຫດເກີດຂື້ນ, ພ້ອມທັງສະຫຼຸບ, ລາຍງານການເຄື່ອນໄຫວກວດກາໃນແຕ່ລະໄລຍະໃຫ້ຂັ້ນເທິງຮັບຊາບ.

**ມາດຕາ 23 ຮູບການກວດກາ ປະກອບດ້ວຍ 03 ຮູບການ:**

- ການກວດກາແບບປົກກະຕິແມ່ນການກວດກາຕາມແຜນການຂອງອົງການບໍລິຫານ ແລະ ຂອງຄະນະ ກວດກາລັດແຕ່ລະຂັ້ນ ທີ່ວາງໄວ້.
- ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີແມ່ນການກວດກາຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຂອງຄະນະກວດກາລັດແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.
- ການກວດກາແບບກະທັນຫັນແມ່ນກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

## ໝວດທີ 7

## ລາຍຮັບ-ລາຍຈ່າຍຂອງເຂດມໍລະດົກພະທາດຫຼວງ

**ມາດຕາ 24 ລາຍຮັບ**

1. ການເກັບປີ້ເຂົ້າຊົມພິພິທະພັນພະທາດຫຼວງ (ລາຍຮັບວິຊາການຂອງຂະແໜງວັດທະນະທຳ ຕາມລະບຽບການ ຄືປະຈຸບັນ)
2. ການບໍລິຈາກໃນທະນາທານຂອງບຸກຄົນ ສາສະນິກະຊົນ (ເປັນລາຍຮັບບໍລິຈາກ)
3. ການປະກອບສ່ວນປັບປຸງປະຕິສັງຂອງນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ (ລາຍຮັບບໍລິຈາກ)
4. ງົບປະມານຂອງລັດ (ການລົງທຶນສາທາລະນະ)
5. ການສຳປະທານຂອງ ບໍລິສັດ ໃນເຂດມໍລະດົກທາດຫຼວງ (ລາຍຮັບອາກອນຂອງລັດຄືປະຈຸບັນ)
6. ການມອບເໝົາໄລຍະສັ້ນ (ໃນງານບຸນ) ຂອງຜູ້ປະກອບການ.
7. ແລະ ລາຍຮັບອື່ນໆ.

**ມາດຕາ 25 ລາຍຈ່າຍ**

1. ຈ່າຍເພື່ອບູລະນະປະຕິສັງຂອນອົງພະທາດຫຼວງ, ກິດຈະການສາທາລະນະສະຖານ, ສາສະນະສະຖານ ແລະ ອະນຸສາວະລີປັກຮັບປີລະນາມ
2. ຈ່າຍເຂົ້າໃນການຮັກສາອະນາໄມ
3. ຈ່າຍກະແສໄຟຟ້າ, ນ້ຳປະປາ, ນ້ຳທິດທຍ້າ ແລະ ແສງສະຫວ່າງ.
4. ຈ່າຍເຂົ້າໃຫ້ການບໍລິຫານຂອງຫ້ອງການ(ໜ່ວຍງານ)ເຂດມໍລະດົກທາດຫຼວງ: ເງິນເດືອນຂອງພະລາກອນ (ອາສາສະໝັກ), ຈ່າຍເຂົ້າໃນບຳເນັດຂອງພະນັກງານລັດ ແລະ ອາສາສະໝັກ.
5. ຈ່າຍໃຫ້ການປ້ອງກັນເຂດມໍລະດົກ.
6. ຈ່າຍເອົາເຂົ້າກອງທຶນມໍລະດົກ ນະຄອນຫຼວງວຽງຈັນ ຕາມກົດໝາຍມໍລະດົກ ມາດຕາ 69,70 ພາກທີ VII ຂອງກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບເລກທີ 44/ສພຊ, ລົງວັນທີ 22 ທັນວາ 2013.
7. ແລະ ລາຍຈ່າຍອື່ນໆ ຕາມລະບຽບການ.

**ມາດຕາ 26 ການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງເຂດມໍລະດົກ**

26.1. ຫ້ອງການ (ຫຼື ໜ່ວຍງານ) ເຂດມໍລະດົກເປັນໜ່ວຍງານໜຶ່ງສັງກັດຢູ່ໃນພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, ມີພາລະບົດບາດ ຄຸ້ມຄອງ ແລະ ບໍລິການ ພື້ນທີ່ເຂດມໍລະດົກ ຕາມຂໍ້ຕົກລົງສະບັບນີ້ ແລະ ຂໍ້ຕົກລົງສະເພາະ, ເບື້ອງຕົ້ນໃຫ້ເປັນກອງວິຊາການໜຶ່ງ ແລະ ກ້າວເປັນຫົວໜ່ວຍວິສາຫະກິດລັດດ້ານວັດທະນະທຳ.

26.2. ລາຍຮັບ ແລະ ລາຍຈ່າຍຂອງຫ້ອງການມໍລະດົກໃຫ້ຖືບັນຊີ ແລະ ມີລະຫັດສະເພາະຂອງຕົນໂດຍໃຫ້ເອົາລະຫັດບັນຊີປະຈຸບັນກໍ່ໄດ້.

26.3 ຮັບປະກັນແຜນລາຍຈ່າຍຂອງຫ້ອງການມໍລະດົກບໍ່ໃຫ້ຂາດດຸນ ແລະ ຕັ້ງໜ້າເພີ່ມລາຍຮັບໃຫ້ລັດ (ນະຄອນຫຼວງວຽງຈັນ ແລະ ລັດຖະບານ ແຕ່ລະປີ)

26.3. ກົນໄກ, ລະບອບລະບຽບການລາຍຮັບ-ລາຍຈ່າຍ ຂອງເຂດດັ່ງກ່າວ ຈະປັບປຸງປ່ຽນແປງສອດຄ່ອງຕາມລະບຽບການເງິນຂອງລັດຖະບານໃນແຕ່ລະໄລຍະ.

## ໝວດທີ 8
## ວ່າດ້ວຍຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ.**

1. ຫ້າມບໍ່ໃຫ້ນໍາໃຊ້ ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ເປັນສະຖານທີ່ເຄື່ອນໄຫວຊຸມນຸມທາງການເມືອງ, ການເຄື່ອນໄຫວກິດຈະກໍາຕ່າງໆ ທີ່ຂັດຕໍ່ລະບຽບກົດໝາຍ.
2. ຫ້າມບຸກຄົນ, ນິຕິບຸກຄົນ ຈັບຈອງ, ອ້າງສິດຄອບຄອງ ແລະ ນໍາໃຊ້ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ເພື່ອຫາຜົນປະໂຫຍດໂດຍທີ່ບໍ່ໄດ້ຮັບການອະນຸຍາດຈາກອົງການຄຸ້ມຄອງຕາມທີ່ລະບຸໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.
3. ຫ້າມນໍາໃຊ້ສະຖານທີ່ສາທາລະນະ ຂອງສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ເຄື່ອນໄຫວກິດຈະກໍາ ທີ່ບໍ່ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດຈົບງາມ.
4. ຫ້າມນໍາໃຊ້ສະຖານທີ່ສະແດງ ພຶດຕິກໍາ ລາມົກ ອານາຈານທີ່ບໍ່ສອດຄ່ອງກັບ ຮີດຄອງປະເພນີ ວັດທະນະທໍາອັນດີງາມຂອງຊາດ.

**ມາດຕາ 28 ຂໍ້ຫ້າມ ສໍາລັບພະນັກງານລັດ ທີ່ເຮັດໜ້າທີ່ຄຸ້ມຄອງບໍລິຫານ ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.**

1. ຫ້າມສວຍໃຊ້ສິດ, ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວຈາກວຽກງານການຄຸ້ມຄອງບໍລິຫານສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.
2. ຫ້າມສວຍໃຊ້ສິດ, ໜ້າທີ່ ເກີນຂອບເຂດທີ່ເປັນສາເຫດ ໃຫ້ເກີດຜົນເສຍຫາຍ ແກ່ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ.
3. ຫ້າມສົມຮູ້ຮ່ວມຄິດກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ເພື່ອນໍາໃຊ້ສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ເຄື່ອນໄຫວທີ່ຂັດກັບກົດໝາຍ ແລະ ລະບຽບການ.
4. ຫ້າມບໍ່ໃຫ້ມີການປະລະໜ້າທີ່ຄວາມຮັບຜິດຊອບ ທີ່ການຈັດຕັ້ງໄດ້ມອບໝາຍ.

**ມາດຕາ 29 ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ທີ່ດໍາລົງຊີວິດ, ປະກອບອາຊີບ ຢູ່ບໍລິເວນໃກ້ຄຽງສະໜາມຫຼວງ ແລະ ບໍລິເວນອ້ອມຮອບພະທາດຫຼວງ.**

1. ຫ້າມບໍ່ໃຫ້ມີການປຸກສ້າງທຸກປະເພດທີ່ສູງກ່ວາ ຫລື ເທົ່າກັບລວງສູງຂອງພະທາດຫຼວງ (ໃນວົງລັດສະໝີດ້ານຕາເວັນອອກ-ຕາເວັນຕົກ, ດ້ານເໜືອ, ດ້ານໃຕ້ 500 ແມັດຕາມແຜນຜັງເຂດມໍລະດົກ) ແລະ ທຸກການປຸກສ້າງຕ້ອງໄດ້ນໍາເອົາແບບມາຜ່ານ ຄະນະກໍາມະການມໍຣະດົກ ຂັ້ນນະຄອນຫຼວງວຽງຈັນ ເພື່ອພິຈາລະນາ.
2. ຫ້າມບໍ່ໃຫ້ມີການກໍ່ສ້າງ ທຸກປະເພດທີ່ເປັນການແຕະຕ້ອງ ເຖິງລະບົບລະບາຍນໍ້າ ໃນຂອບເຂດບໍລິເວນສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນເດີ່ນອ້ອມຮອບ.
3. ຫ້າມບໍ່ໃຫ້ນໍາໃຊ້ກົນຈັກໜັກ, ລົດບັນທຸກ, ລົດລາກແກ່ ທີ່ມີນໍ້າໜັກເກີນ 20 ໂຕນ ເຂົ້າມາໃນສະໜາມຫຼວງ ແລະ ເຂດບໍລິເວນອ້ອມຮອບພະທາດຫຼວງ.
4. ຫ້າມສວຍໃຊ້ ພື້ນທີ່ທາງຮ່ອມ, ຖະໜົນ, ທາງຍ່າງຂ້າງຖະໜົນ ແລະ ສະຖານທີ່ເປົ່າຫວ່າງອື່ນ ໃນບໍລິເວນອ້ອມຂ້າງ, ໃກ້ຄຽງກັບສະໜາມຫຼວງ ແລະ ບໍລິເວນອ້ອມຮອບພະທາດຫຼວງ ເພື່ອຫາຜົນປະໂຫຍດ, ໃຫ້ແກ່ສ່ວນບຸກຄົນ, ໃນຍາມບຸນທາດຫຼວງ ຕ້ອງໄດ້ຄືນພື້ນທີ່ໃຫ້ຄະນະກໍາມະການບຸນເປັນຜູ້ຈັດສັນຕາມຄວາມເໝາະສົມ.

## ໝວດທີ 9

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ແມ່ນການປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

ຜູ້ມີຜົນງານໃນການປະກອບສ່ວນ ໃຫ້ຂໍ້ມູນຂ່າວສານ ທີ່ເປັນປະໂຫຍດ ຕໍ່ກັບວຽກງານຄຸ້ມຄອງ, ປົກປັກຮັກສາສະໜາມຫຼວງ, ພະທາດຫຼວງ ແລະ ບໍລິເວນອ້ອມຮອບ ກໍ່ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫລື ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ມີການລະເມີດ ຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ, ໃຊ້ແທນຄືນຄ່າເສຍຫາຍທາງແພ່ງ ຫລື ລົງໂທດທາງອາຍາ ຕາມກໍລະນີເບົາ ຫລື ໜັກ.

## ໝວດທີ 10

## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

32.1. ອົງການປົກຄອງນະຄອນຫຼວງວຽງຈັນ ມອບໃຫ້ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກອງບັນຊາການປ້ອງກັນຄວາມສະຫງົບ, ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ, ອົງການປົກຄອງເມືອງໄຊເສດຖາ, ຄະນະສົງວັດທາດຫຼວງເໜືອ, ຄະນະສົງວັດທາດຫຼວງໃຕ້ ເປັນຜູ້ຈັດຕັ້ງປະຕິບັດຕາມພາລະບົດບາດ ສິດ ແລະ ໜ້າທີ່ພື້ນຖານຂອງຕົນ ແລະ ຕາມໝວດທີ 4 ຂອງຂໍ້ຕົກລົງສະບັບນີ້.

32.2. ຫ້ອງການມໍລະດົກທາດຫຼວງແມ່ນອົງກອນ ບໍລິການລວມສູນປະຕູດຽວ ແລະ ຮັບຜິດຊອບຜົນໄດ້ ແລະ ຜົນເສຍໂດຍກົງ ທີ່ລະບຸໃນຂໍ້ຕົກລົງສະບັບນີ້.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງ ໄດ້ລົງໃນຈົດໝາຍເຫດທາງລັດຖະການ 30 ວັນ ເປັນຕົ້ນໄປ ແລະ ມີການປັບປຸງປ່ຽນແປງຕາມດຳລັດ ຫຼື ລັດຖະບັນຍັດຕໍ່ໜ້າ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄຂທູນ